# ການຊໍາລະຄ່າພາສີທີ່ດິນຮູບແບບໃໝ່
# "ຜ່ານລະບົບທະນາຄານ"

ນັບແຕ່ໄດ້ເປີດໃຫ້ບໍລິການລະບົບຮັບຊໍາລະຄ່າພາສີທີ່ດິນຜ່ານລະບົບທະນາຄານ ທົ່ວປະເທດໃນທ້າຍປີຜ່ານມາ ໂດຍໄດ້ຈັດພິທີເຊັນສັນຍາ ແລະ ເປີດໂຕການນໍາໃຊ້ ລະຫວ່າງກົມສ່ວຍສາອາກອນ ກະຊວງການເງິນ ແລະ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ພ້ອມດ້ວຍ ທະນາຄານຕົວແທນ 6 ທະນາຄານຢ່າງເປັນທາງການໃນວັນທີ 17 ທັນວາ 2018 ທີ່ ໂຮງແຮມລາວ ພລາຊາ, ນະຄອນຫຼວງວຽງຈັນ ເຫັນໄດ້ວ່າໄດ້ຮັບຄວາມສົນໃຈຈາກສັງຄົມຫຼາຍສົມຄວນ ເຊິ່ງປະຊາຊົນລາວໃນຂອບເຂດທົ່ວປະເທດແມ່ນສາມາດເສຍພາສີທີ່ດິນຜ່ານລະບົບທະນາຄານ *ໂດຍຜ່ານ BCEL i-Bank, BCEL One ແລະ ເຄົາເຕີ້ບໍລິການ ຂອງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ທຸກສາຂາທົ່ວປະເທດ ຫຼື ຜ່ານ Mobile Banking ແລະ ເຄົ້າເຕີ້ບໍລິການຂອງທະນາຄານຕົວແທນ ຫຼື ຜ່ານຕົວແທນຮັບຊໍາລະຄ່າພາສີທີ່ດິນ.*

ສໍາລັບທະນາຄານຕົວແທນໃນເບື້ອງຕົ້ນລວມມີ: ທະນາຄານພັດທະນາລາວ, ສົ່ງເສີມກະສິກໍາ, ຮ່ວມທຸລະກິດລາວ-ຫວຽດ, ລາວ-ຈີນ, ຮ່ວມພັດທະນາ ແລະ ການຄ້າສາກົນ (BIC) ແລະ ຍັງຈະສືບຕໍ່ຮ່ວມມືກັບທະນາຄານອື່ນໆອີກ ໂດຍຈະແຈ້ງສັງຄົມຊາບເປັນແຕ່ລະໄລຍະ.

- **ທ່ານສາມາດຊໍາລະຄ່າພາສີທີ່ດິນຜ່ານລະບົບທະນາຄານ ທົ່ວປະເທດຜ່ານ 3 ຊ່ອງທາງທີ່ສະດວກ ແລະ ງ່າຍຕໍ່ການຊໍາລະດັ່ງນີ້:**

**1. ຜ່ານ BCEL i-Bank, BCEL One ຂອງ ທຄຕລ ຫຼື Mobile Banking ຂອງທະນາຄານຕົວແທນ ດ້ວຍຕົວເອງ**

- ເຂົ້າລະບົບ
- ເຂົ້າຟັງຊັ້ນ "ຈ່າຍຄ່າໃບບິນ" (ສໍາລັບ BCEL i-Bank)
- ເລືອກເມນູ "ຊໍາລະພາສີທີ່ດິນ" ແລະ ປະຕິບັດຕາມຂັ້ນຕອນແນະນໍາ
- ນໍາ QR ທີ່ໄດ້ຈາກການຊໍາລະໄປພິມໃບຮັບເງິນພາສີທີ່ດິນທີ່ປ່ອງບໍລິການ ທຄຕລ ຫຼື ທະນາຄານຕົວແທນ ຫຼື ຕູ້ພິມໃບຮັບເງິນພາສີທີ່ດິນອັດຕະໂນມັດ

**2. ຜ່ານປ່ອງບໍລິການ ທຄຕລ ແລະ ທະນາຄານຕົວແທນ**

- ສາມາດຈ່າຍດ້ວຍເງິນສົດ ແລະ ບັນຊີ ກໍ່ໄດ້

**3. ຜ່ານຕົວແທນຮັບຊໍາລະ**

- ສາມາດຈ່າຍດ້ວຍເງິນສົດ

- **ເອກະສານທີ່ຕ້ອງແຈ້ງທີ່ປ່ອງບໍລິການເຄົາເຕີ້ຂອງທະນາຄານ ແລະ ຕົວແທນຮັບຊໍາລະ** ເຊິ່ງປະກອບມີດັ່ງນີ້:

1. ໃບຕາດິນ ແລະ ໃບເກັບເງິນພາສີທີ່ດິນຂອງປີຫຼ້າສຸດ; ຫຼື
2. ໃບຢັ້ງຢືນສິດນໍາໃຊ້ທີ່ດິນ ແລະ ໃບເກັບເງິນພາສີທີ່ດິນຂອງປີຫຼ້າສຸດ; ຫຼື
3. ໃບຕິດຕາມເສຍພາສີທີ່ດິນ (ກໍລະນີບໍ່ມີໃບຕາດິນ ຫຼື ໃບຢັ້ງຢືນສິດນໍາໃຊ້ທີ່ດິນ); ຫຼື
4. ເອກະສານຢັ້ງຢືນຈາກຂະແໜງການຊັບພະຍາກອນທໍາມະຊາດແລະສິ່ງແວດລ້ອມ ຫຼື ພາກສ່ວນອື່ນໆທີ່ມີສິດອະນຸຍາດອອກໃຫ້ ແລະ ໃບເກັບເງິນພາສີທີ່ດິນຂອງປີຫຼ້າສຸດ.

ທ່ານສາມາດນໍາໃຊ້ເອກະສານຂໍ້ໃດຂໍ້ໜຶ່ງທີ່ໄດ້ລະບຸຂ້າງເທິງນີ້ເພື່ອແຈ້ງຕໍ່ເຈົ້າໜ້າທີ່ທະນາຄານໃນເວລາຊໍາລະຄ່າພາສີທີ່ດິນ ໂດຍສາມາດນໍາໃຊ້ຕົ້ນສະບັບ ຫຼື ສໍາເນົາກໍ່ໄດ້, ຫຼັງຈາກຊໍາລະແລ້ວຈະໄດ້ຮັບໃບຮັບເງິນພາສີທີ່ດິນເພື່ອເປັນຫຼັກຖານຢັ້ງຢືນໃຫ້ແກ່ເຈົ້າຂອງດິນ. ກໍລະນີທີ່ທ່ານຊໍາລະຜ່ານ **i-Bank, BCEL One ຂອງ ທຄຕລ ຫຼື Mobile Banking ຂອງທະນາຄານຕົວແທນ ດ້ວຍຕົວເອງ** ແມ່ນສາມາດຮັບໃບຮັບເງິນພາສີທີ່ດິນໄດ້ທີ່ເຄົາເຕີ້ບໍລິການຂອງທະນາຄານ ຫຼື ສະແກນຄິວອາໂຄດທີ່ຕູ້ພິມໃບຮັບເງິນພາສີທີ່ດິນອັດຕະໂນມັດໄດ້.

ການເປີດນຳໃຊ້ລະບົບຮັບຊຳລະຄ່າພາສີທີ່ດິນຮູບແບບໃໝ່ຜ່ານລະບົບທະນາຄານໃນຄັ້ງນີ້ຖືເປັນການຮ່ວມມືທີ່ດີອີກຄັ້ງ ລະຫວ່າງກົມສ່ວຍສາອາກອນ ກະຊວງການເງິນ ແລະ ທຄຕລ ພ້ອມດ້ວຍທະນາຄານຕົວແທນ ໃນການຈັດເກັບຄ່າພາສີທີ່ດິນໃນທົ່ວປະເທດ ສ້າງຄວາມສະດວກຕໍ່ປະຊາຊົນ ແລະ ພາກລັດ ສາມາດເກັບລາຍຮັບເຂົ້າງົບປະມານແຫ່ງລັດໄດ້ທັນເວລາ, ຖືກຕ້ອງ, ມີຄວາມໂປ່ງໃສ ແລະ ສາມາດກວດສອບຄືນໄດ້ ເຊິ່ງຊ່ວຍໃຫ້ການເກັບລາຍຮັບເຂົ້າງົບປະມານແຫ່ງລັດໃຫ້ມີປະສິດທິຜົນຍິ່ງຂຶ້ນ.




ສອບຖາມຂໍ້ມູນເພີ່ມຕື່ມ: Call center: 1555, Facebook: BCEL Bank, Website: [www.bcel.com.la](http://www.bcel.com.la)

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ທັນສະໄໝ ວ່ອງໄວ ໝັ້ນໃຈ